ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

ເລກທີ 0779 /ສຄອຊ.ພປຮ

ນະຄອນຫຼວງວຽງຈັນ,ວັນທີ 27 AUG 2020

## ໜັງສືເຊີນ

<u>ຮຽນ</u>: ທ່ານ ປະທານ, ຄະນະອຳນວຍການບໍລິສັດ ສະມາຊິກ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

<u>ເລື່ອງ</u>: ເຊີນທ່ານເຂົ້າຮ່ວມກອງປະຊຸມໃຫຍ່ຂອງຄະນະບໍລິຫານງານຊຸດທີ 7 ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

- ອີງຕາມດຳລັດເລກທີ 237/ນຍ, ລົງວັນທີ 18 ພຶດສະພາ 2020, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ຂໍຖືເປັນກຽດແຈ້ງມາຍັງສະມາຊິກ ທຸກທ່ານຊາບວ່າ ສຄອຊ ຈະໄດ້ຈັດຕັ້ງ **ກອງປະຊຸມໃຫຍ່ຂອງຄະນະບໍລິຫານງານຊຸດທີ 7 ຂຶ້ນ ໃນວັນສຸກ, ວັນທີ 25 ກັນຍາ 2020, ເວລາ 08:00 ຫາ 16:00ໂມງ, ທີ່ ຫໍປະຊຸມແຫ່ງຊາດ (ຫ້ອງ 06)** ເພື່ອສະຫຼຸບຜົນງານການເຄື່ອນໄຫວ ການຊີ້ນຳ, ນຳພາ ສຄອຊ ຂອງຄະນະບໍລິຫານງານຊຸດທີ 7 ແລະ ເລືອກຕັ້ງເອົາຄະນະບໍລິຫານງານຊຸດທີ 8 ເພື່ອມານຳພາ ສຄອຊ ອີກ 03 ປີຕໍ່ໜ້າ.

ໃນໂອກາດອັນສຳຄັນນີ້ ສຄອຊ ຈຶ່ງແຈ້ງເຊີນມາຍັງສະມາຊິກ ທຸກທ່ານ ເພື່ອເຂົ້າຮ່ວມກອງປະຊຸມໃຫຍ່ຂອງ ຄະນະບໍລິຫານງານຊຸດທີ 7 ແລະ ໃຊ້ສິດຂອງທ່ານໃນການເລືອກເອົາຄະນະບໍລິຫານງານຊຸດທີ 8. ກະລຸນາແຕ່ງຕັ້ງຕາງໜ້າຈາກບໍລິສັດຂອງທ່ານ 01 ທ່ານ ເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້ດ້ວຍ.

**ໝາຍເຫດ:**

- ສຳລັບສະມາຊິກກິຕິມະສັກ (VVIP) ແລະ ສະມາຊິກສະໜັບສະໜູນ (VIP), ສາມາດລົງທະບຽນເຂົ້າຮ່ວມກອງປະຊຸມ <u>ເລີ່ມແຕ່ວັນທີ 01 ກັນຍາ 2020 ຈົນຮອດ ວັນທີ 15 ກັນຍາ 2020.</u>
- ສຳລັບສະມາຊິກສາມັນ <u>ທີ່ມີອາຍຸການນຳໃຊ້ ຮອດປີ 2019 ແລະ 2020</u>, ສາມາດລົງທະບຽນເຂົ້າຮ່ວມກອງປະຊຸມໄດ້ ເລີ່ມແຕ່ວັນທີ 04 ກັນຍາ 2020 ຈົນຮອດ ວັນທີ 15 ກັນຍາ 2020.

ດ້ວຍຄວາມນັບຖື.

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

ປະທານ

ອຸເດດ ສຸວັນນະວົງ

<u>ກະລຸນາແຈ້ງຕອບ:</u>

ທ່ານ ປິ່ງທອງ 020 22232993

ນາງ ດອນສະຫວັນ 020 55261789

ຖະໜົນໄກສອນພົມວິຫານ, ບ້ານ ໂພນພະເນົາ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 4596

ໂທລະສັບ: +856 21 453312; ແຟັກ: +856 21 452580; Email: info@lncci.la; www.lncci.la